ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່

ເລກທີ 1209 /ພບ

ນະຄອນຫຼວງວຽງຈັນ, ລົງວັນທີ 17 AUG 2020

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກໍາມະການຕີລາຄາ ແລະ ຮັບຮອງປະລິມານສະສົມແຮ່ທາດ

- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 296/ນຍ, ລົງວັນທີ 4 ກັນຍາ 2017;
- ອີງຕາມ ຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ວ່າດ້ວຍການສ້າງຕັ້ງຄະນະກໍາມະການຕີລາຄາ ແລະ ຮັບຮອງປະລິມານສະສົມແຮ່ທາດ ສະບັບເລກທີ 1587/ພບ, ລົງວັນທີ 31 ກໍລະກົດ 2018;
- ອີງຕາມການສະເໜີຂອງຄະນະກໍາມະການຕີລາຄາ ແລະ ຮັບຮອງປະລິມານສະສົມແຮ່ທາດ ສະບັບເລກທີ 0001/ຄຕຮ, ລົງວັນທີ 18 ກໍລະກົດ 2019.

ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ອອກຂໍ້ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດອົງປະກອບການຈັດຕັ້ງ, ການເຄື່ອນໄຫວ, ສິດ, ໜ້າທີ່ ຂອງຄະນະກໍາມະການຕີລາຄາ ແລະ ຮັບຮອງປະລິມານສະສົມແຮ່ທາດ ເພື່ອຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ ລະບຽບ, ຫຼັກການ, ມາດຕະຖານ ແລະ ຄວາມຕ້ອງການ ທີ່ກ່ຽວຂ້ອງກັບການຕີລາຄາ ແລະ ຮັບຮອງເອົາຜົນການປະເມີນປະລິມານສະສົມແຮ່ທາດ.

**ມາດຕາ 2 ທີ່ຕັ້ງ ແລະ ອົງປະກອບການຈັດຕັ້ງ**

ຄະນະກໍາມະການຕີລາຄາ ແລະ ຮັບຮອງປະລິມານສະສົມແຮ່ທາດ ເປັນໜ່ວຍງານໜຶ່ງທີ່ຖືກສ້າງຕັ້ງຂຶ້ນໂດຍກະຊວງພະລັງງານ ແລະ ບໍ່ແຮ່ ຕາມກົດໝາຍ ວ່າດ້ວຍແຮ່ທາດ ມາດຕາ 118 ຂໍ້ 7, ຕໍ່ໄປນີ້ເອີ້ນວ່າ "**ຄຕຮ**" ຊຶ່ງມີອົງປະກອບການຈັດຕັ້ງ ດັ່ງນີ້:

1. ທ່ານ ຮອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ຜູ້ຊີ້ນໍາວຽກງານທໍລະນີສາດ ແລະ ບໍ່ແຮ່ ເປັນປະທານ;
2. ທ່ານ ຫົວໜ້າສະຖາບັນຄົ້ນຄວ້າພະລັງງານ ແລະ ບໍ່ແຮ່ ເປັນຮອງປະທານ ພ້ອມທັງເປັນຫົວໜ້າກອງເລຂາ;

3. ທ່ານ ຮອງຫົວໜ້າກົມທໍລະນີສາດ ແລະ ແຮ່ທາດ ເປັນຄະນະ ພ້ອມທັງ ເປັນຮອງຫົວໜ້າກອງເລຂາ;

4. ທ່ານ ຮອງຫົວໜ້າສະຖາບັນຄົ້ນຄວ້າພະລັງງານ ແລະ ບໍ່ແຮ່ ເປັນຄະນະ ພ້ອມທັງ ເປັນຮອງຫົວໜ້າກອງເລຂາ;

5. ທ່ານ ຮອງຫົວໜ້າກົມຄຸ້ມຄອງບໍ່ແຮ່ ເປັນຄະນະ ພ້ອມທັງເປັນຮອງຫົວໜ້າກອງເລຂາ;

6. ຄະນະວິຊາການ ແລະ ບຸກຄົນທີ່ມີຄວາມສາມາດສະເພາະດ້ານທໍລະນີສາດ ແລະ ແຮ່ທາດ ເປັນຄະນະ.

**ມາດຕາ 3 ໜ້າທີ່ ຂອງ ຄຕຮ**

ຄຕຮ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ກວດກາ, ຕີລາຄາ ຂໍ້ມູນປະລິມານສະສົມແຮ່ທາດ ເພື່ອກຳນົດຂັ້ນປະລິມານສະສົມແຮ່ທາດ ຕາມມາດຕະຖານການແບ່ງຂັ້ນປະລິມານສະສົມແຮ່ທາດ;

2. ສ້າງຄຳແນະນຳ, ມາດຕະຖານ, ຂໍ້ກຳນົດທາງດ້ານເຕັກນິກ, ຄວາມຕ້ອງການທາງດ້ານເຕັກນິກ ກ່ຽວກັບການຈຳແນກ, ການຈັດກຸ່ມ ແລະ ການແບ່ງຂັ້ນຊັບພະຍາກອນແຮ່ທາດ ແລະ ການປະເມີນປະລິມານສະສົມແຮ່ທາດ ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ປະກາດໃຊ້ ແລະ ເປັນເຄື່ອງມືໃນການຈັດຕັ້ງປະຕິບັດ;

3. ຄຸ້ມຄອງ, ຮັກສາບັນດາຂໍ້ມູນ, ເອກະສານກ່ຽວກັບປະລິມານສະສົມແຮ່ທາດ;

4. ເຮັດໜ້າທີ່ເປັນເສນາທິການໃຫ້ ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອຊີ້ນຳໃຫ້ບັນດາກົມ, ສະຖາບັນ, ລັດວິສາຫະກິດ ແລະ ຜູ້ລົງທຶນດ້ານບໍ່ແຮ່ ປະຕິບັດຕາມຄຳແນະນຳ, ມາດຕະຖານທາງດ້ານເຕັກນິກ ກ່ຽວກັບການຕີລາຄາ ແລະ ຮັບຮອງປະລິມານສະສົມແຮ່ທາດ;

5. ກວດກາພາກສະໜາມ ເພື່ອກວດກາ, ຢັ້ງຢືນຂໍ້ມູນທາງດ້ານທໍລະນີສາດ ແລະ ແຮ່ທາດ ເພື່ອເປັນບ່ອນອີງໃຫ້ແກ່ການຕີລາຄາ ແລະ ຮັບຮອງປະລິມານສະສົມແຮ່ທາດ;

6. ຂຶ້ນແຜນງົບປະມານຮັບໃຊ້ໃນການເຄື່ອນໄຫວ ຂອງຄະນະກຳມະການ;

7. ສ້າງກອງເລຂາຊ່ວຍວຽກ ຄຕຮ ຊຶ່ງມີຫ້ອງການຕັ້ງຢູ່ສະຖາບັນຄົ້ນຄວ້າພະລັງງານ ແລະ ບໍ່ແຮ່.

**ມາດຕາ 4 ຂອບເຂດສິດ ຂອງ ຄຕຮ**

1. ສະເໜີທິດທາງ ແລະ ວິທີການແກ້ໄຂບັນຫາຕ່າງໆທີ່ກ່ຽວຂ້ອງກັບການຕີລາຄາ ແລະ ຮັບຮອງປະລິມານສະສົມແຮ່ທາດ ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ພິຈາລະນາ;

2. ສົມທົບກັບສະຖາບັນທີ່ກ່ຽວຂ້ອງຂອງພາຍໃນ ແລະ ສາກົນ ເພື່ອຍົກລະດັບ ແລະ ແລກປ່ຽນບົດຮຽນກ່ຽວກັບການຕີລາຄາ ແລະ ປະເມີນປະລິມານສະສົມແຮ່ທາດ;

3. ສະເໜີໃຫ້ມີບຸກຄົນຜູ້ທີ່ມີປະສົບການສະເພາະດ້ານ ກ່ຽວກັບການປະເມີນແຫຼ່ງຊັບພະຍາກອນແຮ່ທາດ ແລະ ປະລິມານສະສົມແຮ່ທາດ ຈາກພາຍໃນ ແລະ/ຫຼື ສາກົນ ເຂົ້າຮ່ວມການຕີລາຄາ ແລະ ປະເມີນປະລິມານສະສົມແຮ່ທາດ;

4. ພິຈາລະນາຢັ້ງຢືນ ແລະ ຮັບຮອງເອົາແຫຼ່ງຊັບພະຍາກອນແຮ່ທາດ ແລະ ປະລິມານສະສົມແຮ່ທາດ ຈາກບົດລາຍງານຜົນການສຳຫຼວດແຮ່ທາດ ຕາມຄຳແນະນຳ, ມາດຕະຖານ, ຂໍ້ກຳນົດທາງດ້ານເຕັກນິກ, ຄວາມຕ້ອງການທາງດ້ານເຕັກນິກ.

**ມາດຕາ 5 ສິດ ແລະ ໜ້າທີ່ຂອງປະທານ ຄຕຮ**

ປະທານ ຄຕຮ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສົ່ງເສີມໃຫ້ ຄຕຮ ໄປຝຶກອົບຮົມຢູ່ພາຍໃນ ແລະ ຕ່າງປະເທດ ກ່ຽວກັບການຕີລາຄາ ແລະ ຮັບຮອງປະລິມານສະສົມແຮ່ທາດ;

2. ຈັດຕັ້ງ ແລະ ເປັນປະທານ ກອງປະຊຸມຄົ້ນຄວ້າກ່ຽວກັບການຕີລາຄາ ແລະ ຮັບຮອງປະລິມານສະສົມແຮ່ທາດ, ສັງລວມການປະກອບຄຳເຫັນຂອງ ຄຕຮ ແລະ ສະຫຼຸບຜົນຂອງກອງປະຊຸມ;

3. ມອບສິດໃຫ້ຮອງປະທານດຳເນີນວຽກງານຕາມສິດ ແລະ ໜ້າທີ່ຂອງປະທານ ໃນກໍລະນີບໍ່ສາມາດເຂົ້າຮ່ວມເປັນປະທານກອງປະຊຸມໄດ້;

4. ແບ່ງຄວາມຮັບຜິດຊອບ ໃຫ້ແຕ່ລະທ່ານໃນຄະນະກຳມະການ;

5. ຊີ້ນຳໂດຍກົງຕໍ່ການເຄື່ອນໄຫວຂອງ ຄຕຮ ແລະ ເປັນຜູ້ລົງລາຍເຊັນກ່ຽວກັບມະຕິກອງປະຊຸມ ຄຕຮ;

6. ລາຍງານຜົນການດຳເນີນກອງປະຊຸມຂອງ ຄຕຮ ໃຫ້ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ພິຈາລະນາ ແລະ ເຫັນດີໃຫ້ ຄຕຮ ຮັບຮອງເອົາປະລິມານສະສົມແຮ່ທາດ;

7. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່.

## ມາດຕາ 6 ສິດ ແລະ ໜ້າທີ່ຂອງຮອງປະທານ ແລະ ຄະນະ ຄຕຮ

**1. ສິດ:**

1.1. ໄດ້ຮັບຂໍ້ມູນ ແລະ ເອກະສານຕ່າງໆທີ່ພົວພັນເຖິງໂຄງການສຳຫຼວດແຮ່ທາດເພື່ອຄົ້ນຄວ້າ ຮັບໃຊ້ໃຫ້ແກ່ການຕີລາຄາ ແລະ ປະເມີນປະລິມານສະສົມແຮ່ທາດໃນກອງປະຊຸມ;

1.2. ປະກອບຄຳເຫັນ ແລະ ປຶກສາຫາລືກັບບຸກຄົນທີ່ມີຄວາມສາມາດສະເພາະດ້ານທໍລະນີສາດ ແລະ ແຮ່ທາດ ໃນກອງປະຊຸມ.

**2. ໜ້າທີ່:**

2.1. ເຂົ້າຮ່ວມກອງປະຊຸມຕີລາຄາ ແລະ ຮັບຮອງປະລິມານສະສົມແຮ່ທາດຂອງ ຄຕຮ (ກໍລະນີບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ ຕ້ອງແຈ້ງໃຫ້ປະທານ ຫຼື ສະມາຊິກໃນ ຄຕຮ ຮູ້ກ່ອນ ລ່ວງໜ້າຢ່າງໜ້ອຍ 3 ວັນ);

2.2. ສຶກສາ, ຄົ້ນຄວ້າຂໍ້ມູນເອກະສານທີ່ພົວພັນເຖິງໂຄງການສຳຫຼວດແຮ່ທາດ;

2.3. ປະກອບຄຳເຫັນ, ຕີລາຄາເນື້ອໃນບົດລາຍງານຜົນການສຳຫຼວດແຮ່ທາດ ແລະ ຕ້ອງຮັບຜິດຊອບຕໍ່ຄຳເຫັນ, ຕໍ່ການຕີລາຄາຂອງຕົນໃຫ້ແກ່ ຄຕຮ;

2.4. ບັນທຶກ, ເກັບຮັກສາຂໍ້ມູນຕ່າງໆຂອງແຕ່ລະກອງປະຊຸມ.

3. ນອກຈາກສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນ ຂໍ້ 1 ແລະ ຂໍ້ 2 ຂອງມາດຕານີ້ແລ້ວ, ຮອງປະທານຍັງມີສິດ ແລະ ໜ້າທີ່ຄືກັບປະທານ ໃນກໍລະນີ ເຮັດໜ້າທີ່ແທນປະທານ ຄຕຮ.

## ມາດຕາ 7 ໜ້າທີ່ຂອງກະຊວງພະລັງງານ ແລະ ບໍ່ແຮ່

1. ສະໜອງພາຫະນະ ແລະ ເຄື່ອງມືທີ່ຈຳເປັນໃຫ້ແກ່ ຄຕຮ ເພື່ອເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດວຽກງານພາກສະໜາມ;

2. ສະໜອງງົບປະມານເພື່ອຮັບໃຊ້ການເຄື່ອນໄຫວ ແລະ ປະຕິບັດວຽກງານຂອງ ຄຕຮ.

## ມາດຕາ 8 ຫຼັກການເຮັດວຽກຂອງ ຄຕຮ

1. ຄຕຮ ເຮັດວຽກຕາມຫຼັກການແບບລວມສູນປະຊາທິປະໄຕ, ມີການປຶກສາຫາລືນຳກັນໂດຍກົງ, ປະກອບຄຳເຫັນ ແລະ ຕີລາຄາດ້ວຍວິທີການລົງຄະແນນສຽງແບບປິດລັບ ຫຼື ເປີດເຜີຍ;

2. ບັນດາສະມາຊິກ ຄຕຮ ເຮັດວຽກເປັນລະບົບຕາມໜ້າທີ່ຮັບຜິດຊອບ;

3. ຄຕຮ ຄົ້ນຄວ້າ ແລະ ຮັບຮອງເອົາບົດລາຍງານຜົນການປະເມີນປະລິມານຊັບພະຍາກອນແຮ່ທາດ, ປະລິມານສະສົມແຮ່ທາດ ແລະ ເອກະສານກ່ຽວຂ້ອງ ພາຍໃນ 30 ວັນລັດຖະການ ນັບແຕ່ມື້ທີ່ໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ;

4. ວັນເວລາຈັດກອງປະຊຸມຂອງ ຄຕຮ ແມ່ນປະທານເປັນຜູ້ກຳນົດ.

**ມາດຕາ 9 ເງື່ອນໄຂການຈັດກອງປະຊຸມ**

1. ບົດລາຍງານຜົນການສຳຫຼວດແຮ່ທາດ ຕ້ອງສອດຄ່ອງ ກັບກົດໝາຍ, ສັນຍາ ແລະ ນິຕິກຳຕ່າງໆ (ແບບຟອມການລາຍງານ, ໃບອະນຸຍາດສຳຫຼວດ, ໃບທະບຽນສຳປະທານ, ໃບທະບຽນວິສາຫະກິດ, ໃບທະບຽນອາກອນ, ການປະຕິບັດພັນທະທາງດ້ານການເງິນ,...) ຕ້ອງມີຜົນສັກສິດໃນການນຳໃຊ້ ແລະ ປະຕິບັດໃຫ້ຄົບຖ້ວນ;

2. ຕ້ອງມີປະທານ ຄຕຣ ເປັນປະທານກອງປະຊຸມ. ໃນກໍລະນີປະທານຕິດຂັດວຽກງານ ຕ້ອງມອບສິດໃຫ້ຮອງປະທານ ເປັນຜູ້ດຳເນີນກອງປະຊຸມແທນ;

3. ກອງປະຊຸມ ຄຕຣ ຈະເປີດຂຶ້ນໄດ້ກໍຕໍ່ເມື່ອ ສະມາຊິກ ຄຕຣ ມີໜ້າເຂົ້າຮ່ວມ ສອງສ່ວນສາມ (2/3) ຂຶ້ນໄປ, ໃນນັ້ນ ຜູ້ທີ່ຖືກມອບໝາຍໃຫ້ເຮັດໜ້າທີ່ຄົ້ນຄວ້າບົດລາຍງານສຳຫຼວດ ຈາກກົມທໍລະນີສາດ ແລະ ແຮ່ທາດ ແລະ ກອງເລຂາ ຕ້ອງໄດ້ເຂົ້າຮ່ວມ.

**ມາດຕາ 10 ຂັ້ນຕອນການດຳເນີນກອງປະຊຸມ**

1. ສະເໜີວາລະ ແລະ ຈຸດປະສົງຂອງກອງປະຊຸມໃຫ້ພາກສ່ວນເຂົ້າຮ່ວມກອງປະຊຸມຊາບ;

2. ສະມາຊິກ ຄຕຣ (ຜູ້ທີ່ຖືກມອບໝາຍໃຫ້ຄົ້ນຄວ້າ) ລາຍງານກ່ຽວກັບ ການສັງລວມຜົນການຄົ້ນຄວ້າ, ສຶກສາ, ຕີລາຄາຜົນການສຳຫຼວດແຮ່ທາດ, ຄຳເຫັນຂອງຊ່ຽວຊານບຸກຄົນທີ່ມີຄວາມສາມາດສະເພາະດ້ານ. ໃນກໍລະນີຈຳເປັນ ປະທານກອງປະຊຸມ ສາມາດສະເໜີໃຫ້ຊ່ຽວຊານ ອະທິບາຍເພີ່ມເຕີມ ກ່ຽວກັບການຕີລາຄາ ແລະ ປະເມີນຂອງຕົນ;

3. ສະມາຊິກ ຄຕຣ (ຮອງຫົວໜ້າກົມທໍລະນີສາດ ແລະ ແຮ່ທາດ) ມີຄຳເຫັນເພີ່ມເຕີມ;

4. ຄຕຣ ແລະ ຜູ້ທີ່ຖືກມອບໝາຍໃຫ້ຄົ້ນຄວ້າ ຍົກບັນຫາທີ່ຍັງບໍ່ທັນຊັດເຈນ;

5. ຄຕຣ, ຜູ້ເຂົ້າຮ່ວມກອງປະຊຸມ ປຶກສາຫາລືກ່ຽວກັບຜົນການຕີລາຄາ ແລະ ປະເມີນປະລິມານສະສົມແຮ່ທາດ;

6. ຄຕຣ ຕ້ອງປະກອບຄຳເຫັນສ່ວນຕົວ ແລະ ຕີລາຄາເຂົ້າໃນແບບຟອມ ແລະ ລົງຄະແນນສຽງແບບປິດລັບ ຫຼື ເປີດເຜີຍ;

7. ປະທານ ຄຕຣ ປະກາດຜົນຂອງກອງປະຊຸມ;

8. ປະທານກອງປະຊຸມກ່າວປິດກອງປະຊຸມຢ່າງເປັນທາງການ.

**ມາດຕາ 11 ເນື້ອໃນບົດປະກອບຄຳເຫັນ ແລະ ຕີລາຄາ ຂອງ ຄຕຣ**

1. ຜູ້ຖືກມອບໝາຍໃຫ້ຄົ້ນຄວ້າ ຕ້ອງປະກອບຄຳເຫັນ ແລະ ຕີລາຄາບົດລາຍງານ ດ້ວຍເນື້ອໃນ ດັ່ງນີ້: ຕີລາຄາກ່ຽວກັບດ້ານນິຕິກຳ, ປະເພດແຮ່ທາດ, ພື້ນຖານເອກະສານຂໍ້ມູນທາງດ້ານທໍລະນີສາດ ແລະ ແຮ່ທາດ, ຄວາມຖືກຕ້ອງກ່ຽວກັບການແບ່ງປະເພດຄວາມສັບສົນຂອງແຫຼ່ງແຮ່ທາດ, ການເລືອກຕາໜ່າງ ການສຳຫຼວດ; ການອອກແບບເຕັກນິກການສຳຫຼວດ, ບໍລິມາດການສຳຫຼວດ; ພື້ນຖານໃນການຄັດເລືອກລາຍການສຳຫຼວດ, ວິທີການຄິດໄລ່ປະລິມານສະສົມແຮ່ທາດ ແລະ ຜົນການປະເມີນປະລິມານສະສົມແຮ່ທາດ; ລັກສະນະຄວາມຖືກຕ້ອງ, ຄວາມເປັນໄປໄດ້ໃນການຈັດຕັ້ງປະຕິບັດໂຄງການ, ວຽກງານປົກປັກຮັກສາສິ່ງແວດລ້ອມ ແລະ ຊັບພະຍາກອນແຮ່ທາດ, ຕີລາຄາພື້ນຖານ ແລະ ຜົນການນຳໃຊ້ງົບປະມານໃຊ້ຈ່າຍເຂົ້າໃນການສຳຫຼວດ (ຕາມແບບຟອມທີ່ກຳນົດໃນເອກະສານຊ້ອນທ້າຍ 1);

2. ແບບຟອມປະກອບຄຳເຫັນ, ຕີລາຄາຂອງ ຄຕຣ ລວມມີ ດັ່ງນີ້: ຕີລາຄາທາງດ້ານນິຕິກຳ, ຕີລາຄາພື້ນຖານທາງດ້ານເອກະສານຂໍ້ມູນທໍລະນີສາດ ແລະ ແຮ່ທາດ ເພື່ອເປັນການຄັດຈ້ອນເນື້ອທີ່, ຕາໜ່າງການສຳຫຼວດ,

ລະບົບການສຳຫຼວດ; ການອອກແບບວິທີການສຳຫຼວດ, ບໍລິມາດການສຳຫຼວດ; ຜົນການປະເມີນປະລິມານສະສົມແຮ່ທາດ; ຄວາມເໝາະສົມ ແລະ ຜົນຂອງການຈັດຕັ້ງປະຕິບັດໂຄງການ ແລະ ງົບປະມານການໃຊ້ຈ່າຍ (ຕາມແບບຟອມທີ່ກຳນົດໃນ ເອກະສານຊ້ອນທ້າຍ 2).

**ມາດຕາ 12 ສະຫຼຸບກອງປະຊຸມ**

1. ຕ້ອງໄດ້ເວົ້າແຈ້ງບັນຫາ ແລະ ເນື້ອໃນທີ່ໄດ້ ແລະ ບໍ່ໄດ້ ຂອງໂຄງການສຳຫຼວດແຮ່ທາດ, ບັນດາເນື້ອໃນທີ່ຕ້ອງການປັບປຸງ;

2. ຜົນກອງປະຊຸມທີ່ມີຄວາມໝາຍ ຕ້ອງມີຄະແນນ 2/3 ຂອງຜູ້ເຂົ້າຮ່ວມ ຂຶ້ນໄປ;

3. ໃນກໍລະນີ ຜົນຂອງກອງປະຊຸມບໍ່ຜ່ານ ຄຕຮ ມີໜ້າທີ່ຮັບຜິດຊອບແຈ້ງໃຫ້ກົມທໍລະນີສາດ ແລະ ແຮ່ທາດ ເພື່ອແຈ້ງຕໍ່ໃຫ້ຜູ້ລົງທຶນຮັບຊາບ ຢ່າງເປັນທາງການ.

**ມາດຕາ 13 ເອກະສານຂອງກອງປະຊຸມ ຄຕຮ**

1. ບົດບັນທຶກຜູ້ເຂົ້າຮ່ວມກອງປະຊຸມ ຄຕຮ (ມີລາຍເຊັນ, ຊື່ແຈ້ງຂອງຜູ້ເຂົ້າຮ່ວມ, ຊື່ແຈ້ງຂອງປະທານ ແລະ ຜູ້ບັນທຶກ);

2. ບົດລາຍງານສັງລວມຫຍໍ້ກ່ຽວກັບການຄົ້ນຄວ້າຜົນການສຳຫຼວດແຮ່ທາດ;

3. ບົດປະກອບຄຳເຫັນຂອງຜູ້ທີ່ຖືກມອບໝາຍໃຫ້ຄົ້ນຄວ້າ;

4. ບົດປະກອບຄຳເຫັນ ຂອງ ຄຕຮ;

5. ບັນດາເອກະສານ, ຂໍ້ມູນອື່ນໆທີ່ກ່ຽວຂ້ອງກັບບົດລາຍງານການສຳຫຼວດແຮ່ທາດ.

**ມາດຕາ 14 ງົບປະມານການໃຊ້ຈ່າຍຂອງ ຄຕຮ**

ງົບປະມານໃນການໃຊ້ຈ່າຍຂອງ ຄຕຮ ແມ່ນເອົາຈາກທຶນຄຸ້ມຄອງໂຄງການຂອງບັນດາບໍລິສັດຢູ່ໃນໄລຍະສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຈາກກົມຄຸ້ມຄອງບໍ່ແຮ່ ແລະ ກົມທໍລະນີສາດ ແລະ ແຮ່ທາດ ກົມລະ 25%.

**ມາດຕາ 15 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີຂໍ້ຕົກລົງສະບັບໃໝ່ປ່ຽນແທນ.

ລັດຖະມົນຕີ

ກະຊວງພະລັງງານ ແລະ ບໍ່ແຮ່ ລັດຖະມົນຕີ

ດຣ.ຄຳມະນີ ອິນທິລາດ